# <u>ການເອົາເຮືອນຢູ່ທີ່ຍຸຕິທັມ ແລະສັນຊາດດັ້ງເດີມ</u>
# <u>Fair Housing and National Origin</u>

ກົດໝາຍຂອງຣັຖບານແລະຂອງຣັດ ບໍ່ອະນຸຍາດໃຫ້ມີ ການຈຳແນກຢູ່ໃນການຕິດຕໍ່ ດ້ານການເອົາເຮືອນຢູ່ ເນື່ອງຈາກສັນຊາດດັ້ງເດີມ.

**ປະໂຍກວ່າ "ສັນຊາດດັ້ງເດີມ" ນັ້ນໝາຍວ່າແນວໃດ?**

ສັນຊາດດັ້ງເດີມ (national origin) ຂອງທ່ານໝາຍເຖິງ ທີ່ເກີດ, ກົກເຄົ້າເຫຼົ່າກໍ, ພາສາ, ແລະ/ຫຼືປະເພນີຂອງທ່ານ. ເປັນການຜິດກົດໝາຍ ທີ່ເຈົ້າຂອງເຮືອນປະຕິ ເສດບໍ່ເອົາເຮືອນໃຫ້ຢູ່ ຫຼືປະຕິບັດກັບຜູ້ໃດຜູ້ນຶ່ງຕ່າງກັນ ໃນກການຕິດຕໍ່ດ້ານການເອົາເຮືອນຢູ່ ເພາະວ່າ:

- ຊື່, ຮູບຮ່າງໜ້າຕາ, ສຳນຽງ, ຫຼືການປະກອບສ່ວນຢູ່ໃນປະເພນີຊຶ່ງພົວພັນກັບສັນຊາດນຶ່ງ.
- ເຈົ້າຂອງເຮືອນເຂົ້າໃຈຜິດວ່າ ບຸກຄົນດັ່ງກ່າວພົວພັນກັບສັນຊາດສເພາະໃດນຶ່ງ.
- ບຸກຄົນດັ່ງກ່າວພົວພັນຄົນຂອງສັນຊາດສເພາະໃດນຶ່ງ.

ການເອົາເຮືອນຢູ່ທີ່ຍຸຕິທັມ ໃຊ້ໃດ້ຕໍ່ການເຊົ່າ, ການຊື້ຂາຍ, ການຢືມເງິນ, ປະກັນພັຍ, ແລະການໂຄສະນາ. ບໍ່ມີຜູ້ໃດສາມາດປະຕິເສດ ບໍ່ໃຫ້ເອົາເຮືອນຢູ່, ຈຳກັດການເຂົ້າເຖິງເຮືອນຢູ່, ເຮັດໃຫ້ຜູ້ຊອກເຮືອນທໍ້ຖອຍ ຫຼືແຕ່ງກົດຣະບຽບ, ຄ່າທັມນຽມ, ຫຼືມາຕຖານຕ່າງໆ ທີ່ແຕກຕ່າງກັນຂຶ້ນ ເພາະວ່າສັນຊາດດັ້ງເດີມຂອງຄອບຄົວ.

ຕົວຢ່າງບາງຈຳນວນຂອງການຈຳແນກ ອີງໃສ່ສັນຊາດດັ້ງເດີມນັ້ນຮວມມີ ການຊັກຈູງຜູ້ເຊົ່າຂອງສັນຊາດສເພາະໃດນຶ່ງ ໄປຫາພາກສ່ວນໃດນຶ່ງຂອງຫ້ອງແຖວ, ປະຕິເສດໃນການສ້ອມແປງຫ້ອງ ທີ່ຄົນມີສັນຊາດສເພາະໃດນຶ່ງຢູ່, ຫຼືຫ້າມ ຫຼືຈຳກັດແຂກຂອງຜູ້ເຊົ່າ ເພາະວ່າສັນຊາດດັ້ງເດີມຂອງຜູ້ເຊົ່າ ຫຼືແຂກຂອງລາວ.

**ເຈົ້າຂອງເຮືອນສາມາດ ທຳການຈຳແນກຕໍ່ຄົນທີ່ເວົ້າພາສາອັງກິດບໍ່ເປັນບໍ?**

ບໍ່. ແຕ່ວ່າ ບໍ່ມີຂໍ້ກຳນົດທາງກົດໝາຍ ໃນການທີ່ເຈົ້າຂອງເຮືອນ ຕ້ອງໃຫ້ການແປພາສາກັບຜູ້ເຊົ່າ. ຖ້າຜູ້ເຊົ່າປາກພາສາອັງກິດບໍ່ເປັນ, ນັ້ນກໍສຸດແລ້ວແຕ່ ຜູ້ເຊົ່າຈະຊອກຫາເອົາຜູ້ໃດຜູ້ນຶ່ງ ມາຊ່ວຍລາວລົມກັບເຈົ້າຂອງເຮືອນ. ເພື່ອຄວາມແຈ່ມແຈ້ງຂອງສິດທິແລະໜ້າທີ່ຮັບຜິດຊອບຂອງເຂົາເຈົ້າ, ຜູ້ເຊົ່າຊຶ່ງເວົ້າພາສາອັງກິດບໍ່ລ່ຽນໄຫຼ ຄວນຫາເອົາສມາຊິກຄອບຄົວທີ່ເຊື່ອຖືໄດ້ ຫຼືໝູ່ເພື່ອນມາຊ່ວຍອ່ານສັນຍາເຊົ່າໃຫ້ຟັງ ກ່ອນທີ່ເຂົາເຈົ້າຈະເຊັນສັນຍາ. ມັນຍັງເປັນການດີອີກດ້ວຍ ໃນການຈັດຫາເອົາຣາຍຊື່ແລະເລກໂທລະສັບ ຂອງຜູ້ແປພາສາໃຫ້ກັບເຈົ້າຂອງເຮືອນ.

**ເຈົ້າຂອງເຮືອສາມາດກຳນົດເອົາ ນໍ້າເບີບັດປະກັນສັງຄົມ ໃນໃບຄຳຮ້ອງເຊົ່າເຮືອນ ຂອງຜູ້ມາສມັກເຊົ່າບໍ?**

ການໃຊ້ນໍ້າເບີບັດປະກັນສັງຄົມ (Social Security Number) ໃນການກວດເບິ່ງຄວາມເປັນມາ ຂອງຜູ້ສມັກເຊົ່າເຮືອນ ແມ່ນຖືວ່າເປັນການປະຕິບັດອັນເປັນມາຕຖານ ຕາບໃດທີ່ເຈົ້າຂອງເຮືອນກຳນົດເອົານຳ ຜູ້ສມັກເຊົ່າທຸກຄົນ. ຖ້າວ່າເຈົ້າຂອງເຮືອນກຳນົດເອົາ ນໍ້າເບີບັດປະກັນສັງຄົມນຳແຕ່ຜູ້ສມັກເຊົ່າຂອງສັນຊາດດັ້ງເດີມ ໃດນຶ່ງເທົ່ານັ້ນ, ອັນນັ້ນຈະຖືວ່າແມ່ນການລະເມີດ ການເອົາເຮືອນຢູ່ທີ່ຍຸຕິທັມ. ສ່ວນຫຼາຍ, ເຈົ້າຂອງເຮືອນໃຊ້ນໍ້າເບີບັດປະກັນສັງຄົມຂອງຜູ້ເຊົ່າ ກວດ ເບິ່ງປະວັດຂອງ ການເຊົ່າເຮືອນ, ເຄຣດິດ, ແລະກະທຳຄວາມຜິດ. ຖ້າຜູ້ເຊົ່າບໍ່ມີນໍ້າເບີບັດປະກັນສັງຄົມ, ເຈົ້າຂອງເຮືອນຄວນຮັບເອົານໍ້າເບີໜັງສືເຂົ້າ ເມືອງມາເຮັດວຽກ ຫຼືນໍ້າເບີໜັງສືເຂົ້າເມືອງມາຮຽນ. ຜູ້ເຊົ່າບໍ່ຄວນໃຊ້ນໍ້າເບີບັດປະກັນສັງຄົມທີ່ຜິດ

FAIR HOUSING COUNCIL of Oregon
**1020 SW Taylor Street, Suite 700 Portland, Oregon 97205-2512**
**ເລກໂທ: 503-223-8197 ຫຼື 1-800-424-3247 (ຄົນຫູໜວກ/TTY)**
**Web: http://www.fhco.org ທາງອີເມລ: information@fhco.org**
**ສາຍໂທດ່ວນສຳນັກງານຮ້ອງຮຽນ ຂອງ HUD: 1-800-877-0246**

ເປັນອັນຂາດ.

## ຜູ້ເຊົ່າເຮືອນມີຂໍ້ອ້າງອີງຫຍັງແດ່ ຖ້າວ່າຜູ້ເຊົ່າເຮືອນຄົນອື່ນໆ ລັງຄວາມເຂົາເຈົ້າເພາະວ່າ ສັນຊາດດັ້ງເດີມຂອງເຂົາເຈົ້າ?

ເຈົ້າຂອງເຮືອນມີໜ້າທີ່ຖືກຕ້ອງຕາມກົດໝາຍ ໃນການປົກປ້ອງຜູ້ເຊົ່າເຮືອນຂອງຕົນ ຈາກການລັງຄວາມອີງໃສ່ສັນຊາດດັ້ງເດີມຂອງເຂົາເຈົ້າ. ຖ້າຜູ້ເຊົ່າເຮືອນຄົນນຶ່ງ ຖືກລັງຄວາມເພາະວ່າສັນຊາດດັ້ງເດີມຂອງລາວ ແລະເຈົ້າຂອງເຮືອນຮູ້ເຫັນການລັງຄວາມນີ້, ເຈົ້າຂອງເຮືອນມີໜ້າທີ່ ເຂົ້າຍຸ້ງກ່ຽວ. ຜູ້ເຊົ່າເຮືອນທຸກຄົນມີສິດຕາມກົດໝາຍ ໃນການໄດ້ຄວາມສງົບສຸກໃນເຮືອນຂອງພວກເຂົາເຈົ້າ. ການລັງຄວາມທີ່ຕໍ່ເນື່ອງນັ້ນ ຈະເປັນສາເຫດໃນການຖືກໄລ່ອອກ.

## ກົດໝາຍການເອົາເຮືອນຢູ່ທີ່ໄດ້ຮັບຄວາມຍຸຕິທັມ ໃຊ້ໄດ້ແຕ່ກັບຜູ້ມີສັນຊາດອາເມຣິກັນ ເທົ່ານັ້ນບໍ?

ຜູ້ໃດທີ່ຢູ່ໃນສະຫາຣັດ ມີສິດທິໃນການປົກປ້ອງການເອົາເຮືອນຢູ່ທີ່ຍຸຕິທັມ. ຖ້າຜູ້ໃດຜູ້ນຶ່ງຢູ່ໃນສະຫາຣັດຢ່າງບໍ່ຖືກກົດໝາຍ, ພວກເຂົາເຈົ້າຍັງມີສິດຍື່ນຄຳຮ້ອງຮຽນ ກ່ຽວກັບການເອົາເຮືອນຢູ່ທີ່ມີຄວາມຍຸຕິທັມ ແຕ່ບໍ່ເລືອກເຮັດເຊັ່ນນັ້ນ ໃນເມື່ອຂໍ້ມູນດັ່ງກ່າວ ຈະເປັນບັນທຶກຂອງສາທາຣະນະ. ບຸກຄົນໃດທີ່ໂທຫາ ຫ້ອງການຄະນະກັມມາທິການດູແລ ການເອົາເຮືອນຢູ່ທີ່ຍຸຕິທັມ ຂອງຣັດອໍຣິກອນ ຈະໄດ້ຮັບຄວາມຊ່ວຍເຫຼືອ ແລະຂໍ້ມູນຢ່າງ ເປັນຄວາມລັບ.

## ຂ້າພະເຈົ້າສາມາດຮຽນຮູ້ ກ່ຽວກັບສິດທິໃນການເອົາເຮືອນຢູ່ທີ່ຍຸຕິທັມນີ້ໄດ້ແນວໃດ?

ໃຫ້ໂທຫາຫ້ອງການຄະນະກັມມາທິການດູແລ ການເອົາເຮືອນຢູ່ທີ່ຍຸຕິທັມຂອງຣັດອໍຣິກອນ (Fair Housing Council of Oregon - FHCO) ທີ່ເບີໂທ 503-223-8197 ຫຼື 1-800-424-3247.

FAIR HOUSING COUNCIL of Oregon

**1020 SW Taylor Street, Suite 700 Portland, Oregon 97205-2512**
**ເລກໂທ: 503-223-8197 ຫຼື 1-800-424-3247 (ຄົນຫູໜວກ/TTY)**
**Web: http://www.fhco.org ທາງອີແມລ: information@fhco.org**
**ສາຍໂທດ່ວນສຳຫຼັບການຮ້ອງຮຽນ ຂອງ HUD: 1-800-877-0246**